ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມລ້ຽງສັດ ແລະ ການປະມົງ

ເລກທີ 0807/ກລປ
ນະຄອນຫລວງວຽງຈັນ, ວັນທີ 07 APR 2020

# ຄຳແນະນຳ
## ວ່າດ້ວຍ ມາດຕະຖານສັດໃຫຍ່ ແລະ ມາດຕະຖານຟາມລ້ຽງສັດໃຫຍ່ ທີ່ຈະສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມລ້ຽງສັດ ແລະ ການປະມົງ ເລກທີ 3824/ກປ, ລົງວັນທີ 18 ສິງຫາ 2017;
- ອີງຕາມ ຂໍ້ກຳນົດ ວ່າດ້ວຍ ເງື່ອນໄຂດ້ານສຸຂານາໄມ ກ່ຽວກັບການກັກກັນ ແລະ ກວດກາສຸຂະພາບສັດໃຫຍ່ທີ່ຈະສົ່ງອອກ ຈາກ ສປປ ລາວ ໄປ ສປ ຈີນ ລະຫວ່າງ ກະຊວງກະສິກຳ ແລະ ປ່າໄມ້ ສປປ ລາວ ແລະ ກົມໃຫຍ່ພາສີແຫ່ງ ສປ ຈີນ ລົງວັນທີ 30 ເມສາ 2019.

ນັບຕັ້ງແຕ່ ລັດຖະບານ ແຫ່ງ ສປປ ລາວ ແລະ ສປ ຈີນ ໄດ້ເປີດກວ້າງການພົວພັນຮ່ວມມືຮອບດ້ານ ເພື່ອໃຫ້ເກີດການພັດທະນາຕາມນະໂຍບາຍ ໜຶ່ງແລວ ໜຶ່ງເສັ້ນທາງ ແລະ ບັນລຸຂໍ້ກຳນົດວ່າດ້ວຍ ເງື່ອນໄຂດ້ານສຸຂານາໄມ ກ່ຽວກັບການກັກກັນ ແລະ ກວດກາສຸຂະພາບສັດໃຫຍ່ທີ່ຈະສົ່ງອອກ ຈາກ ສປປ ລາວ ໄປ ສປ ຈີນ ເປັນຕົ້ນມາ ໄດ້ເຮັດໃຫ້ມີຫຼາຍພາກສ່ວນ ເປັນຕົ້ນ ຜູ້ປະກອບການ ແລະ ຊາວກະສິກອນ ຫັນມາລົງທຶນໃສ່ການລ້ຽງສັດໃຫຍ່ ເພື່ອສະໜອງໃຫ້ແກ່ຕະຫຼາດຂອງ ສປ ຈີນ ນັບມື້ນັບມີຈຳນວນເພີ່ມຂຶ້ນ.

ຢ່າງໃດກໍ່ຕາມ ເພື່ອເຮັດໃຫ້ ຊາວກະສິກອນ, ຜູ້ປະກອບການ ແລະ ຜູ້ລົງທຶນ ມີຄວາມເຂົ້າໃຈກ່ຽວກັບມາດຕະຖານສັດໃຫຍ່ ແລະ ມາດຕະຖານຟາມລ້ຽງສັດໃຫຍ່ ທີ່ຈະສົ່ງອອກໄປ ສປ ຈີນ ເພີ່ມຂຶ້ນ ແລະ ພ້ອມທັງ ໃຫ້ມີບ່ອນອີງ ໃຫ້ແກ່ຂະແໜງການຄຸ້ມຄອງຂອງລັດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ.

ດັ່ງນັ້ນ, ກົມລ້ຽງສັດ ແລະ ການປະມົງ ຈຶ່ງໄດ້ອອກ ຄຳແນະນຳ ກ່ຽວກັບມາດຖານສັດໃຫຍ່ ແລະ ມາດຕະຖານຟາມລ້ຽງສັດໃຫຍ່ ທີ່ຈະສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ ສະບັບນີ້ຂຶ້ນ ໂດຍມີລາຍລະອຽດ ດັ່ງນີ້:

### 1. ກ່ຽວກັບມາດຕະຖານສັດໃຫຍ່ ທີ່ຈະສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ

1.1. ສັດໃຫຍ່ທີ່ຈະສົ່ງອອກໄປ ສປ ຈີນ ຕ້ອງມາຈາກຟາມ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ມາຈາກຟາມທີ່ໄດ້ຮັບການຢັ້ງຢືນເປັນຟາມມາດຕະຖານສົ່ງອອກ ຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຄຸ້ມຄອງກິດຈະການຟາມລ້ຽງສັດໃນ ສປປ ລາວ ສະບັບເລກທີ 0209/ກປ ລົງວັນທີ 06, ກຸມພາ 2013;

1.2. ສັດໃຫຍ່ ອາດ ເປັນ ສາຍພັນ ພື້ນເມືອງ ຫຼື ສາຍພັນປັບປຸງ ຫຼື ສາຍພັນປະສົມ ລະຫວ່າງພັນພື້ນເມືອງ ກັບສາຍພັນປັບປຸງ ໂດຍຕ້ອງມີ ນ້ຳໜັກບໍ່ຫຼຸດ 350 ກິໂລກຣາມ ແລະ ມີອາຍຸບໍ່ເກີນ 4 ປີ ຕາມທີ່ ຕະຫລາດ ສປ ຈີນ ຕ້ອງການ ແລະ ຕ້ອງມີຖິ່ນ ກຳເນີດຢູ່ ສປປ ລາວ ຫຼື ຖ້າເປັນສັດນຳເຂົ້າມາຈາກຕ່າງປະເທດ ຕ້ອງໄດ້ລ້ຽງຢູ່ ສປປ

ລາວ ຢ່າງໜ້ອຍ 150 ວັນ (ລວມທັງໄລຍະເວລາ ລ້ຽງຢູ່ເຂດທ້ອນໂຮມສັດ 45 ວັນ ແລະ ສະຖານທີ່ກັກກັນສັດ 30 ວັນ);

1.3. ແຫຼ່ງລ້ຽງສັດໃຫຍ່ ພາຍໃນ 6 ເດືອນກ່ອນສົ່ງ ສັດໃຫຍ່ ໄປ ສປ ຈີນ ຕ້ອງບໍ່ມີປະຫວັດ ກວດພົບເຊື້ອດ້ວຍການວິໄຈໃນຫ້ອງທົດລອງ ກ່ຽວກັບພະຍາດ ຜິວໜັງອັກເສບຕິດຕໍ່ (Lumpy Skin Disease), ເຍື່ອຫຸ້ມປອດອັກເສບຕິດຕໍ່ຮ້າຍແຮງ (Contagious Bovince Pleuropneumonia), ງົວບ້າ (Bovine Spongiform Encephalopathy), ປາກເປື່ອຍລີ້ນເລັບ (Foot and Mouth Disease), ແທ້ງລູກຕິດຕໍ່ (Brucellosis), ວັນນະໂຣກງົວ-ຄວາຍ (Bovine Tuberculosis), ໄຂ້ເລືອດດຳ (Anthrax), ອະຫິວາສັດກີບຄູ່ໂຕນ້ອຍ (Pest Petits Ruminants) ແລະ ຕ້ອງບໍ່ມີອາການຂອງພະຍາດຕິດຕໍ່ ຫຼື ແມ່ກາຝາກຮ້າຍແຮງອື່ນເກີດຂຶ້ນຢູ່ໃນຟາມດັ່ງກ່າວ;

1.4. ສັດໃຫຍ່ ທີ່ຈະສົ່ງອອກໄປ ສປ ຈີນ ຕ້ອງ ໄດ້ນຳໄປລ້ຽງຢູ່ເຂດທ້ອນໂຮມສັດໃຫຍ່ ໃນລັດສະໝີ 47 ກິໂລແມັດ ຈາກຂອບນອກ ຂອງເຂດກັນຊົນຂອງເຂດປອດພະຍາດປາກເປື່ອຍລີ້ນເລັບ ຢ່າງໜ້ອຍ 45 ວັນ ແລະ ຕ້ອງຜ່ານການກັກກັນຢູ່ສະຖານທີ່ກັກກັນສັດ ບ້ານ ນາຄຳ, ເມືອງ ສິງ ແຂວງຫຼວງນ້ຳທາ ຢ່າງໜ້ອຍ 30 ວັນ;

1.5. ສັດທຸກໂຕ ຕ້ອງມີໃບຢັ້ງຢືນ ການສັກຢາກັນພະຍາດປາກເປື່ອລີ້ນເລັບ, ພະຍາດເຕົ້າໂຮມເລືອດງົວຄວາຍ ແລະ ຖ້າຈຳເປັນ ຕ້ອງຜ່ານການກວດກາຊອກຫາລະດັບພູມຄຸ້ມກັນ ໂດຍຕ້ອງມີລະດັບ ທີ່ສາມາດປ້ອງກັນພະຍາດດັ່ງກ່າວນັ້ນໄດ້;

1.6. ໃນລະຫວ່າງທີ່ ມີການດຳເນີນການກັກກັນ ເພື່ອກຽມສົ່ງອອກ ສັດທຸກໂຕ ຕ້ອງໄດ້ຮັບການກວດກາ ບັນດາຂໍ້ມູນປະຈຳໂຕສັດ, ສຸຂະພາບສັດ, ການປິ່ນປົວ, ການສັກຢາກັນພະຍາດ ແລະ ການຂ້າແມ່ກາຝາກ ຢ່າງລະອຽດ ແລະ ຕ້ອງຮັບປະກັນ ບໍ່ໃຫ້ສັດໄດ້ຮັບຢາທີ່ບໍ່ປອດໄພ ທີ່ຈະກໍ່ໃຫ້ເກີດສານຕົກຄ້າງທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ;

1.7. ສັດໃຫຍ່ ຕ້ອງໄດ້ຮັບອາຫານ ທີ່ມີຄຸນນະພາບດີ, ປອດໄພ, ບໍ່ມາຈາກແຫຼ່ງທີ່ມີພະຍາດສັດຮ້າຍແຮງລະບາດ ແລະ ຕ້ອງບໍ່ມີຮໍໂມນ ເພື່ອກະຕຸ້ນການຈະເລີນເຕີບໂຕຢູ່ໃນອາຫານສັດ;

1.8. ກ່ອນການນຳສັດຂຶ້ນພາຫານະ ເພື່ອຂົນສົ່ງ ໄປ ສປ ຈີນ 24 ຊົ່ວໂມງ ສັດທຸກໂຕ ຕ້ອງຜ່ານການກວດກາລະອຽດເປັນຄັ້ງສຸດທ້າຍ ໂດຍເຈົ້າໜ້າທີ່ສັດຕະວະແພດ ແລະ ຕ້ອງມີໃບຢັ້ງຢືນສຸຂະພາບສັດຢ່າງເປັນທາງການ. ສັດໃຫຍ່ ຕ້ອງມີສຸຂະພາບສົມບູນແຂງແຮງ, ບໍ່ພົບອາການຜິດປົກກະຕິ; ຖ້າເປັນເພດແມ່ ຕ້ອງບໍ່ຖືພາມານ;

1.9. ສັດໃຫຍ່ ຕ້ອງຖືກ ຂົນສົ່ງໄປຕາມເສັ້ນທາງທີ່ ອົງການຄຸ້ມຄອງທີ່ກ່ຽວຂ້ອງກຳນົດ, ພາຫານະທີ່ໃຊ້ຂົນສົ່ງ ຕ້ອງລ້າງ, ອະນາໄມ ແລະ ຂ້າເຊື້ອດ້ວຍຢາຂ້າເຊື້ອທີ່ກົມລ້ຽງສັດ ແລະ ການປະມົງ ແນະນຳ;

1.10. ຕະຫຼອດຕ່ອງໂສ້ ຂອງການລ້ຽງສັດ ນັບຕັ້ງແຕ່ຂັ້ນຂອງການລ້ຽງຢູ່ຟາມ ຈົນຮອດຈຸດສົ່ງອອກ ສັດທຸກໂຕ ຕ້ອງໄດ້ເອົາໃຈໃສ່ ປະຕິບັດ ໃຫ້ຖືກຕ້ອງຕາມຫຼັກການ ສະຫວັດດີການສັດ ທີ່ອົງການສຸຂະພາບສັດສາກົນກຳນົດ.

## 2. ກ່ຽວກັບມາດຕະຖານຟາມລ້ຽງສັດໃຫຍ່ ເພື່ອສົ່ງອອກ ໄປ ສປ ຈີນ

2.1. ຟາມລ້ຽງສັດໃຫຍ່ ຕ້ອງຕັ້ງຢູ່ ສະຖານທີ່ ໆ ເໝາະສົມ, ບໍ່ມີນ້ຳຖ້ວມຂັງ, ໄດ້ຮັບການເຫັນດີຈາກອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ; ຢູ່ຫ່າງໄກຈາກຊຸມຊົນ, ບໍ່ລົບກວນຕໍ່ສັງຄົມອ້ອມຂ້າງ, ບໍ່ມີຄວາມສ່ຽງຕໍ່ການປົນເປື້ອນຈາກສານ ເຄມີ ແລະ ຊີວະພາບ; ມີແຫຼ່ງນ້ຳທີ່ສະອາດ, ພຽງພໍ ແລະ ມີສະພາບແວດລ້ອມທີ່ເໝາະສົມ; ບໍ່ໃກ້ກັບໂຮງຂ້າສັດ ແລະ ບໍ່ຢູ່ເຂດກັນຊົນຂອງເຂດປອດພະຍາດປາກເປື່ອຍລີ້ນເລັບ;

2.2. ພື້ນທີ່ ແລະ ການຈັດວາງຜັງຂອງຟາມ; ຟາມຕ້ອງມີການຈັດວາງ ເຂດລ້ຽງສັດ ແລະ ເຂດກໍ່ສ້າງສິ່ງອຳນວຍຄວາມສະດວກຢ່າງຊັດເຈນ ແລະ ເໝາະສົມ ກັບຂະໜາດຂອງການລ້ຽງສັດ ເຊັ່ນ: ຄວນມີ ເຂດທົ່ງຫຍ້າ, ໂຮງເຮືອນ, ຄອກສັດ, ສາງເກັບຮັກສາອາຫານສັດ, ສິ່ງອຳນວຍຄວາມສະດວກ ແລະ ມີລະບົບຈັດການກັບຂອງເສຍຢ່າງ

ປອດໄພ ແລະ ພຽງພໍ, ມີຮົ້ວກັ້ນອ້ອມຮອບ ທີ່ສາມາດຄວບຄຸມການເຂົ້າອອກ ຂອງຄົນ ແລະ ສັດຈາກພາຍນອກ ແລະ ຕ້ອງຈັດສັນພື້ນທີ່ໆເປັນທີ່ພັກອາໄສຂອງຄົນແຍກຕ່າງຫາກ;

2.3. ໂຮງເຮືອນຕ້ອງເໝາະສົມກັບການລ້ຽງສັດໃຫຍ່ ແຕ່ລະປະເພດ ໂດຍຕ້ອງມີຄອກທີ່ຈັດແບ່ງໃຫ້ເປັນ ພື້ນທີ່ ສໍາລັບການລ້ຽງສັດໃຫຍ່ແຕ່ລະຊ່ວງອາຍຸ ຫຼື ຂະໜາດ; ໂຄງສ້າງໂຮງເຮືອນຕ້ອງເຮັດດ້ວຍວັດຖຸທີ່ທົນທານ, ງ່າຍຕໍ່ການທໍາຄວາມສະອາດ, ບໍາລຸງຮັກສາ ແລະ ມີການລະບາຍອາກາດທີ່ດີ; ຫຼັງຄາ ຄວນມີຄວາມສູງບໍ່ຫລຸດ 3 ແມັດ , ມີຊ່ອງທາງສໍາລັບໄລ່ຕ້ອນສັດ, ບ່ອນໃຫ້ສັດຂຶ້ນລົງ, ຄອກແຄບ, ຄອກແມ່ພັນ, ຄອກພໍ່ພັນ, ຄອກແມ່ລ້ຽງລູກ ຫຼື ຄອກທອມ ແຍກສ່ວນກັນຢ່າງຊັດເຈນ;

2.4. ພື້ນໂຮງເຮືອນຄວນເປັນພື້ນຊີເມັນ, ລາດອຽງ, ບໍ່ມື່ນ ສາມາດທໍາຄວາມສະອາດ ແລະ ຂ້າເຊື້ອໄດ້ໂດຍສະດວກ, ມີລະບົບລະບາຍນໍ້າທີ່ດີ;

2.5. ໂຮງເຮືອນສໍາລັບທອມສັດໃຫຍ່ ອາດ ເປັນຄອກດ່ຽວ ຫຼື ຄອກລວມ ແລ້ວ ແບ່ງເປັນສັດສ່ວນຢ່າງເໝາະສົມກັບລຸ້ນ, ຂະໜາດ ແລະ ຈໍານວນສັດທີ່ລ້ຽງ;

2.6. ຮົ້ວຄອກຄວນມີ ຄວາມສູງ ຢ່າງໜ້ອຍ 150 ຊຕມ. ຮາວຮອບນອກຂອງຄອກ ຄວນ ມີ 4 ຮາວ, ຮາວແບ່ງຄອກພາຍໃນຄອກຄວນມີ 3 ຮາວ;

2.7. ບ່ອນໃຫ້ອາຫານສັດໃຫຍ່ ຕ້ອງເຮັດດ້ວຍວັດຖຸທີ່ສາມາດທໍາຄວາມສະອາດໄດ້ງ່າຍ ແລະ ຕ້ອງມີພຽງພໍກັບຈໍານວນສັດທີ່ລ້ຽງ;

2.8. ຮາງນໍ້າ ຕ້ອງເຮັດດ້ວຍວັດຖຸທີ່ທໍາຄວາມສະອາດໄດ້ງ່າຍ, ຈັດວາງໄວ້ໃນຕໍາແໜ່ງທີ່ເໝາະສົມ ແລະ ທົ່ວເຖິງ;

2.9. ຟາມຕ້ອງມີສາງເກັບຮັກສາອາຫານ ແລະ ບ່ອນເກັບມ້ຽນ ວັດຖຸອຸປະກອນຮັບໃຊ້ ທີ່ຮັບປະກັນຄວາມສະອາດ ແລະ ສາມາດລະບາຍອາກາດໄດ້;

2.10. ອາຫານທີ່ໃຊ້ລ້ຽງສັດຕ້ອງມີ ຄຸນນະພາບດີ, ຜ່ານການວິໄຈຄວາມປອດໄພ ແລະ ມາຈາກແຫຼ່ງທີ່ບໍ່ເກີດພະຍາດຮ້າຍແຮງລະບາດ; ບໍ່ປົນເປື້ອນດ້ວຍສານເຄມີທີ່ເປັນອັນຕະລາຍ ແລະ ບໍ່ປະສົມຮໍໂມນກະຕຸ້ນການຈະເລີນເຕີບໂຕ; ໃນກໍລະນີນໍາໃຊ້ອາຫານສັດປະສົມເອງ ຕ້ອງຄໍານຶງເຖິງ ຄວາມຕ້ອງການທາງດ້ານໂພຊະນາການຂອງສັດ ໃນແຕ່ລະຊ່ວງອາຍຸ. ການຂົນສົ່ງອາຫານສັດ ຕ້ອງຮັບປະກັນບໍ່ໃຫ້ ຖືກຝົນ ແລະ ຕ້ອງມີການຈັດການບັນທຶກການນໍາໃຊ້ອາຫານຢ່າງເປັນລະບົບ;

2.11. ນໍ້າທີ່ໃຊ້ລ້ຽງສັດຕ້ອງ ສະອາດ, ປອດໄພ ແລະ ມີປະລິມານພຽງພໍກັບຄວາມຕ້ອງການຕະຫລອດເວລາ, ແຫຼ່ງນໍ້າຕ້ອງບໍ່ມີຄວາມສ່ຽງປົນເປື້ອນເຄມີ ແລະ ເຊື້ອພະຍາດທີ່ເປັນອັນຕະລາຍ;

2.12. ການບໍລິຫານຄຸ້ມຄອງຟາມ ຕ້ອງມີຄູ່ມືການຈັດການຟາມ ທີ່ມີລາຍລະອຽດການປະຕິບັດງານຂອງຟາມ ເປັນຕົ້ນໂຄງຮ່າງການຈັດຕັ້ງ, ການຈັດການ ແລະ ຄຸ້ມຄອງຝູງສັດ (ທະບຽນພິມສັດ), ອາຫານ ແລະ ນໍ້າ, ການຮັກສາສຸຂະພາບສັດ, ສະຫວັດດີການສັດ, ສິ່ງແວດລ້ອມ, ການບັນທຶກຂໍ້ມູນທີ່ກ່ຽວຂ້ອງທັງໝົດຂອງຟາມ ລວມທັງການວາງແຜນການຜະລິດ ແລະ ການຕະຫຼາດ;

2.13. ບຸກຄະລາກອນ ທີ່ເຮັດວຽກຢູ່ຟາມລ້ຽງສັດ ຕ້ອງມີຈໍານວນ ແລະ ລະດັບວິຊາການ ທີ່ພຽງພໍ, ມີການຈັດແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບຢ່າງຊັດເຈນ, ໄດ້ຮັບການຝຶກອົບຮົມ, ມີສຸຂະພາບສົມບູນແຂງແຮງ, ໄດ້ຮັບການກວດສຸຂະພາບປະຈໍາປີ ແລະ ບໍ່ອະນຸຍາດໃຫ້ ຜູ້ທີ່ເປັນພະຍາດວັນນະໂຣກ ຫຼື ພະຍາດຕິດຕໍ່ຮ້າຍແຮງເຂົ້າມາເຮັດວຽກຢູ່ໃນຟາມ;

2.14. ດ້ານຄວາມສະອາດ ແລະ ຄວາມປອດໄພ ຕ້ອງປະຕິບັດມາດຕະການຄວາມປອດໄພທາງຊີວະພາບທີ່ດີ, ມີອ່າງຢາຂ້າເຊື້ອ ຢູ່ທາງເຂົ້າ ຟາມ, ໂຮງເຮືອນ ແລະ ຄອກສັດ. ອຸປະກອນ ຮັບໃຊ້ຕ້ອງຮັກສາໃຫ້ສະອາດ ມີການບໍາລຸງຮັກສາ, ເກັບກວດອາຈົມ, ລ້າງ ແລະ ຂ້າເຊື້ອຄອກ ຢ່າງເປັນປົກກະຕິ ເພື່ອບໍ່ໃຫ້ເປິເປື້ອນຢູ່ພາຍໃນ ແລະ ອ້ອມຮອບຄອກສັດ;

2.15. ການຈັດການດ້ານສຸຂະພາບສັດ ໃຫ້ມີສັດຕະວະແພດ ຫຼື ຜູ້ໄດ້ຮັບການມອບໝາຍ ເປັນຜູ້ດູແລ, ມີການກັກກັນ ແລະ ກວດກາສຸຂະພາບສັດກ່ອນຈະນຳສັດເຂົ້າມາລ້ຽງໃນຟາມ, ມີແຜນການສັກຢາກັນພະຍາດ, ຂ້າແມ່ກາຝາກພາຍໃນ ແລະ ພາຍນອກ ຢ່າງເປັນລະບົບ; ພາຫານະທີ່ນຳໃຊ້ໃນຟາມຕ້ອງມີການທຳຄວາມສະອາດ ແລະ ຂ້າເຊື້ອທັງກ່ອນ ແລະ ຫຼັງໃຊ້ງານ, ກ່ອນ ເຂົ້າ-ອອກ ຟາມ ຕ້ອງມີການບັນທຶກ; ຟາມຕ້ອງ ມີການເຝົ້າລະວັງພະຍາດປາກເປື່ອຍລີບເລັບ, ພະຍາດເຕົ້ານົມອັກເສບໂຮມເລືອດງົວຄວາຍ ແລະ ພະຍາດອື່ນ ຕາມທີ່ລະບຸໄວ້ໃນຂໍ້ 1.3 ຂອງຄຳແນະນຳສະບັບນີ້ ແລະ ຕ້ອງໄດ້ຮັບການວິໄຈກວດສອບຫາພະຍາດສັດໃຫຍ່ທີ່ສຳຄັນ ໂດຍສະເພາະແມ່ນພະຍາດແທ້ງລູກຕິດຕໍ່ ແລະ ພະຍາດວັນນະໂລກ ປີລະຄັ້ງ;

2.16. ຟາມຕ້ອງມີຄອກແຍກປ່ຽວກັກຂັງງົວເຈັບປ່ວຍເພື່ອປິ່ນປົວ, ມີມາດຕະການປ້ອງກັນສັດທີ່ເປັນພາຫະນຳເຊື້ອພະຍາດເຂົ້າສູ່ຟາມ. ໃນກໍລະນີເກີດ ຫຼື ສົງໄສເກີດພະຍາດລະບາດ ຕ້ອງປະຕິບັດມາດຕະການ ທີ່ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 08/ສພຊ ລົງວັນທີ 11 ພະຈິກ 2016;

2.17. ຟາມລ້ຽງສັດໃຫຍ່ ຕ້ອງມີການຈັດການດ້ານສິ່ງແວດລ້ອມ, ຕ້ອງປະຕິບັດຕາມຄູ່ມື ກ່ຽວກັບ ການທຳລາຍຊາກສົບສັດ, ການບຳບັດນ້ຳເສຍ, ການກຳຈັດຂີ້ເຫຍື້ອ ແລະ ອາຈົມສັດ ຢ່າງເໝາະສົມ ແລະ ຖືກຫຼັກສຸຂານາໄມ;

2.18. ຟາມລ້ຽງສັດ ຕ້ອງມີການຈັດການດ້ານສະຫວັດດີການສັດທີ່ດີ, ໃຫ້ອາຫານຢ່າງພຽງພໍ, ມີການດູແລສັດເຈັບປ່ວຍ ຫຼື ພິການ; ການບັງຄັບສັດ, ການບັນຈຸ, ການຂົນສົ່ງ ຕ້ອງເຮັດແບບບໍ່ທໍລະມານ. ຖ້າຈຳເປັນຕ້ອງຂ້າສັດຕ້ອງປະຕິບັດ ແບບບໍ່ທາລຸນ; ຟາມຕ້ອງມີສະຖານທີ່ ສຳລັບສັດກຽມຈຳໜ່າຍທີ່ຮັບປະກັນ ບໍ່ໃຫ້ສັດໄດ້ຮັບບາດເຈັບ ຫຼື ຕິດພະຍາດ;

2.19. ຟາມຕ້ອງມີລະບົບບັນທຶກ ຂໍ້ມູນ ທີ່ສຳຄັນຂອງການຈັດການຟາມ ເຊັ່ນ: ມີລະບົບທະບຽນພິມສັດ (ການເຮັດກາໝາຍໃສ່ໂຕສັດ, ໃສ່ເບີຫູ, ການເຮັດກາໝາຍເອເລັກໂຕຣນິກ) ທີ່ບົ່ງບອກເຖິງ ຊະນິດ, ເລກລະຫັດ, ສາຍພັນ, ເພດ, ອາຍຸ, ປະຫວັດພໍ່-ແມ່ພັນ, ມື້ນຳສັດເຂົ້າ-ມື້ນຳສັດອອກ ລວມທັງແຫຼ່ງທີ່ມາ ແລະ ປະຫວັດ, ຈຳນວນ, ສະມັດຕະພາບການຜະລິດ, ການນຳໃຊ້ອາຫານ, ປະຫວັດການສັກຢາກັນພະຍາດ, ການປິ່ນປົວ, ຜົນການກວດວິໄຈພະຍາດ, ການບັນທຶກດ້ານສິ່ງແວດລ້ອມ ແລະ ເຫດການເກີດພະຍາດຢູ່ໃນຟາມ ໂດຍຕ້ອງມີລະບົບເກັບຮັກສາຂໍ້ມູນໄວ້ຢ່າງໜ້ອຍ 3 ປີ ຫຼັງຈາກທີ່ນຳສັດອອກຈຳໜ່າຍແລ້ວ;

3. ຜູ້ດຳເນີນທຸລະກິດກ່ຽວກັບການລ້ຽງສັດ ທີ່ມີຈຸດປະສົງຈະສ້າງຕັ້ງຟາມລ້ຽງສັດໃຫຍ່ ເພື່ອການສົ່ງອອກ ຕ້ອງໄດ້ຂໍອະນຸຍາດ ຕາມຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຄຸ້ມຄອງກິດຈະການຟາມລ້ຽງສັດໃນ ສປປ ລາວ ສະບັບເລກທີ 0209/ກປ ລົງວັນທີ 06, ກຸມພາ 2013 ຢ່າງເຂັ້ມງວດ;

4. ມອບໃຫ້ ພະແນກການ, ສູນ ວິຊາການ ອ້ອມຂ້າງກົມລ້ຽງສັດ ແລະ ການປະມົງ, ຂະແໜງລ້ຽງສັດ ແລະ ການປະມົງ ຂັ້ນແຂວງ ທົ່ວປະເທດ ໂຄສະນາເຜີຍແຜ່ ຄຳແນະນຳສະບັບນີ້ ໃຫ້ແກ່ ອົງການທີ່ກ່ຽວຂ້ອງ, ຊາວກະສິກອນ ລວມທັງ ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ຊາບ ເພື່ອພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

**ຫົວໜ້າກົມລ້ຽງສັດ ແລະ ການປະມົງ**

ນ. ວິໄລພອນ ວໍລະພົນ

<u>ບ່ອນສົ່ງ:</u>

1. ທ່ານ ລມຕ ກຊ ກປ;
2. ທ່ານ ຮອງລມຕ ກຊ ກປ ທຸກທ່ານ;
3. ທ່ານ ຫໜ ຫ້ອງການ ກຊ ກປ;
4. ທ່ານ ຫໜ ກົມ ນຳເຂົ້າ-ສົ່ງອອກ ກຊ ອກຄ;
5. ທ່ານ ຫໜ ກົມແຜນການ ແລະ ການເງິນ ກຊ ກປ;
6. ທ່ານ ຫໜ ກົມນະໂຍບາຍ ແລະ ນິຕິກຳ ກຊ ກປ
7. ທ່ານ ຫໜ ກົມສົ່ງເສີມ ເຕັກນິກ ແລະ ປຸງແຕ່ງກະສິກຳ ກຊ ກປ;
8. ທ່ານ ຫໜ ສະຖາບັນ ຄຄ ກປ ແລະ ພຊບ ກຊ ກປ
9. ທ່ານ ຫໜ ພະແນກ ກປ ຂັ້ນແຂວງທົ່ວປະເທດ;
10. ຫໜ ພະແນກ ແລະ ສູນ ວິຊາການ ອ້ອມຂ້າງ ກລປ